# ເຂື່ອນໄຟຟ້ານໍ້າຂອງໄຊຍະບູລີ: ລັດຖະບານລາວລະເມີດສັນຍາແມ່ນໍ້າຂອງປີ 1995 ຄື ແນວໃດ

ໂດຍ: Kirk Herbertson

ເປັນທີ່ຊາບກັນດີແລ້ວວ່າ ໃນວັນທີ 7 ພະຈິກ ປີ 2012, ລັດຖະບານລາວໄດ້ເລີ່ມປະຕິບັດການກໍ່ສ້າງໂຄງການເຂື່ອນໄຊຍະບູລີ ຢ່າງເປັນທາງການ. ເຂື່ອນດັ່ງກ່າວນີ້ຖືວ່າເປັນເຂື່ອນແຫ່ງທໍາອິດທີ່ສະເໜີກໍ່ສ້າງໃສ່ສາຍແມ່ນໍ້າຂອງຕອນລຸ່ມ ແລະ ທັງເປັນເຂື່ອນທີ່ມີບັນຫາໂຕ້ຖຽງກັນຢ່າງໜາຫູ. ຂະບວນການກໍ່ສ້າງເຂື່ອນແຫ່ງນີ້ໄດ້ດໍາເນີນໄປຢ່າງກະຕຸກກະຕັກ. ຄວາມເປັນຈິງແລ້ວ, ກິດຈະກໍາການກໍ່ສ້າງເຂື່ອນແຫ່ງນີ້ແມ່ນໄດ້ເລີ່ມມາກ່ອນແລ້ວສອງປີ ກ່ອນການປະກາດການກໍ່ສ້າງຢ່າງເປັນທາງການ. ຝ່າຍລັດຖະບານຫວຽດນາມ ແລະ ກໍາປູເຈຍໄດ້ສະເໜີໃຫ້ຝ່າຍລາວ ເລື່ອນກໍາໜົດການກໍ່ສ້າງອອກໄປເພາະມີຄວາມກັງວົນກັບບັນຫາຜົນກະທົບຂ້າມຊາຍແດນທີ່ຝ່າຍລາວຍັງບໍ່ໄດ້ຮັບການແກ້ໄຂເທື່ອ. ຝ່າຍລາວ, ບໍ່ພຽງແຕ່ບໍ່ໄດ້ວິໄຈຜົນກະທົບຂ້າມຊາຍແດນເທົ່ານັ້ນ ແຕ່ຫາກຍັງຢືນຢັນວ່າ ເຂື່ອນແຫ່ງນີ້ແມ່ນໄດ້ຮັບການອອກແບບກໍ່ສ້າງຂຶ້ນມາໂດຍບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຍັງຈະເຮັດໃຫ້ສິ່ງແວດລ້ອມມີຄວາມຍືນຍົງອີກດ້ວຍ. ກອງເລຂາຄະນະກໍາມາທິການແມ່ນໍ້າຂອງ (MRC) ບໍ່ເຫັນດີເຫັນພ້ອມກັບຂໍ້ກ່າວອ້າງຂອງລັດຖະບານລາວ ແລະ ລັດຖະບານລາວຍັງໄດ້ເມີນເສີຍຕໍ່ຄໍາແນະນໍາຂອງກອງເລຂາຄະນະກໍາມາທິການແມ່ນໍ້າຂອງຕະຫຼອດມາ. ເຖິງວ່າການກໍ່ສ້າງເຂື່ອນກໍາລັງຄືບໜ້າໄປຢູ່ນັ້ນ ກໍ່ບໍ່ມີໃຜຮູ້ໄດ້ເຖິງຄວາມສ່ຽງທີ່ຈະເກີດຂຶ້ນຈາກເຂື່ອນແຫ່ງນີ້ເລີຍ.

ເຂື່ອນໄຊຍະບູລີ ຖືເປັນເຄື່ອງມືທົດສອບທໍາອິດຂອງຂໍ້ຕົກລົງກ່ຽວກັບແມ່ນໍ້າຂອງ, ເຊິ່ງແມ່ນສົນທິສັນຍາລະຫວ່າງປະເທດທີ່ຝ່າຍລາວ, ກໍາປູເຈຍ ແລະ ຫວຽດນາມໄດ້ລົງລາຍເຊັນກັນໃນປີ 1995. ຈຸດປະສົງຫຼັກຂອງສົນທິສັນຍາສະບັບນີ້ກໍ່ແມ່ນເພື່ອສົ່ງເສີມການນໍາໃຊ້ ແລະ ຄຸ້ມຄອງອ່າງນໍ້າຂອງຮ່ວມກັນລະຫວ່າງລັດຖະບານລາວ, ກໍາປູເຈຍແລະ ຫວຽດນາມ. ເຖິງຢ່າງໃດກໍ່ຕາມ, ແທນທີ່ລັດຖະບານລາວຈະໃຫ້ຄວາມຮ່ວມມືກັບລັດຖະບານປະເທດເພື່ອນບ້ານໃກ້ຄຽງທີ່ເປັນຄູ່ພາຄີສົນທິສັນຍາກັນນັ້ນ, ແຕ່ຊໍ້າພັດໄປປະຕິບັດການກໍ່ສ້າງເຂື່ອນນໍ້າຂອງໄຊຍະບູລີໂດຍບໍ່ສົນໃຈຕໍ່ຂໍ້ສະເໜີ ແລະ ຄວາມກັງວົນຂອງຝ່າຍກໍາປູເຈຍ ແລະ ຫວຽດນາມກ່ຽວກັບຜົນກະທົບຂ້າມຊາຍແດນທີ່ຈະເກີດຂຶ້ນຈາກໂຄງການເຂື່ອນດັ່ງກ່າວ. ສ່ວນຝ່າຍລັດຖະບານໄທຊໍ້າພັດມິດງຽບຢູ່ໂດຍບໍ່ມີຄໍາເຫັນໃດໆຕໍ່ກັບສຽງຄັດຄ້ານການກໍ່ສ້າງເຂື່ອນຂອງຝ່າຍກໍາປູເຈຍ ແລະ ຫວຽດນາມ. ຍິ່ງໄປກວ່ານັ້ນ, ກໍ່ຍັງໄດ້ສະໜອງເງິນທຶນກໍ່ສ້າງໃຫ້ກັບຝ່າຍລາວຢ່າງງຽບໆ ແລະ ທັງຍັງຕົກລົງຊື້ກະແສໄຟຟ້າຈາກເຂື່ອນແຫ່ງນີ້ນໍາລັດຖະບານລາວອີກດ້ວຍ. ມາຮອດເດືອນພະຈິກ ປີ 2012, ການຈັດຕັ້ງປະຕິບັດໂຄງການກໍ່ສ້າງເຂື່ອນຂອງລັດຖະບານລາວ ຮ່ວມກັບລັດຖະບານໄທໄດ້ລໍ້າໜ້າຕໍ່ໄປ ແລະ ມາຮອດດຽວນີ້, ແຮງກົດດັນຈາກຝ່າຍກໍາປູເຈຍ ແລະ ຫວຽດນາມເພື່ອທີ່ຈະຍົກເອົາບັນຫາສິ່ງກັງວົນກ່ຽວກັບຜົນກະທົບຈາກເຂື່ອນສະເໜີຕໍ່ຝ່າຍລາວກໍ່ມີເຫຼືອໜ້ອຍລົງ.

ລັດຖະລານລາວ ຢືນຢັນວ່າ ໂຄງການກໍ່ສ້າງເຂື່ອນນໍ້າຂອງໄຊຍະບູລີແມ່ນມີຄວາມສອດຄ່ອງກັບຂໍ້ຕົກລົງແມ່ນໍ້າຂອງ ປີ 1995. ຕໍ່ກັບຖ້ອຍຖະແຫຼງຂອງລັດຖະບານລາວແນວນີ້ກໍ່ຈະບໍ່ມີໃຜຕັ້ງຄາຖາມຂຶ້ນມາອີກແລ້ວ.

ໃນບົດລາຍງານສະບັບໜຶ່ງໃໝ່ໆນີ້, ພວກເຮົາໄດ້ທຳການສຶກສາເງື່ອນໄຂສຳຄັນທີ່ໄດ້ລະບຸໄວ້ໃນສັນຍາໂດຍລະອຽດ. ຖ້າເບິ່ງພາບລວມແລ້ວ, ຈະເຫັນໄດ້ວ່າເນື້ອໃນຂອງສັນຍາຍັງມີຄວາມຄຸມເຄືອຢູ່ຫຼາຍ. ພວກເຮົາໄດ້ພະຍາຍາມຊອກຫາຄວາມກະຈ່າງແຈ້ງຫຼາຍຂຶ້ນໂດຍໄດ້ສຶກສາເນື້ອໃນທັງໝົດຂອງສັນຍາ. ນອກນັ້ນພວກເຮົາກໍ່ຍັງໄດ້ສຶກສາ: (i) ບົດບັນທຶກປະຫວັດການເຈລະຈາທີ່ໄດ້ອະທິບາຍເຖິງເຈດຈຳນົງຂອງຄູ່ພາຄີສົນທິສັນຍາຝ່າຍຕ່າງໆມີໃນເວລາຮ່ວມກັນຮ່າງເອກະສານສັນຍາ; ແລະ (ii) ກົດໝາຍສາກົນທີ່ອະທິບາຍເຖິງຄວາມໝາຍຂອງຄຳສັບຕ່າງໆທີ່ໄດ້ລະບຸລົງໃນສັນຍາ. ຈາກການສຶກສາດັ່ງກ່າວກໍ່ສາມາດເຫັນພາບຂອງເນື້ອໃນຂອງສັນຍາໄດ້ແຈ່ມແຈ້ງຂຶ້ນ. ພວກເຮົາຕີລາຄາໄດ້ຢ່າງຖືກຕ້ອງວ່າ ລັດຖະບານລາວ ຕີຄວາມໝາຍຂອງເນື້ອໃນສັນຍາແມ່ນ້ຳຂອງຜິດພາດ ແລະ ປະຕິບັດບໍ່ສອດຄ່ອງກັບເງື່ອນໄຂສຳຄັນຫຼາຍຂໍ້ຂອງສັນຍາແມ່ນ້ຳຂອງ.

## ມີຄວາມຈຳເປັນທີ່ລັດຖະບານລາວຈະຕ້ອງຫາຂໍ້ຕົກລົງກັບປະເທດເພື່ອນບ້ານຂອງຕົນກ່ອນເລີ່ມຕົ້ນປະຕິບັດໂຄງການກໍ່ສ້າງເຂື່ອນແຫ່ງນີ້.

ເພື່ອໃຫ້ມີຄວາມສະເໝີພາບດ້ານສິດທິຂອງບັນດາປະເທດໃນຂົງເຂດອ່າງແມ່ນ້ຳຂອງຕອນລຸ່ມ ແລະ ເທິງໄດ້ນັ້ນ, ສັນຍາແມ່ນ້ຳຂອງຮຽກຮ້ອງໃຫ້ລັດຖະບານທັງສີ່ປະເທດທີ່ເປັນພາຄີນຳກັນໃຊ້ຄວາມພະຍາຍາມດ້ວຍ **"ຄວາມຈິງໃຈ"** ຕໍ່ກັນເພື່ອຫາຂໍ້ຕົກລົງນຳກັນວ່າຈະດຳເນີນປະຕິບັດໂຄງການຕໍ່ໄປຫຼືບໍ່. ແທນທີ່ວ່າຈະພະຍາຍາມຊອກຫາຂໍ້ຕົກລົງກ່ຽວກັບເຂື່ອນນ້ຳຂອງໄຊຍະບູລີ, ລັດຖະບານລາວ ຊ້ຳພັດໄດ້ຖະແຫຼງວ່າ ລາວ *ຈະພິຈາລະນາ* ສະເພາະແຕ່ຄຳຄິດເຫັນຂອງລັດຖະບານປະເທດອື່ນເທົ່ານັ້ນ. ລາວບໍ່ເຄີຍພະຍາຍາມທີ່ຈະປະນີປະນອມ ຫຼື ພະຍາຍາມທີ່ຈະຫາຂໍ້ຕົກລົງແກ້ໄຂບັນຫາຮ່ວມກັນແຕ່ຢ່າງໃດ.

## ລັດຖະບານລາວຕ້ອງໃຫ້ໂອກາດແກ່ລັດຖະບານປະເທດອື່ນປະເມີນຜົນກະທົບໂຄງການ.

"ການປຶກສາຫາລືກ່ອນການເລີ່ມໂຄງການຂອງຄະນະກຳມາທິການແມ່ນ້ຳຂອງ" ແມ່ນຂະບວນການສຳຄັນທີ່ລັດຖະບານຂອງສີ່ປະເທດສະມາຊິກພາຄີສົນທິສັນຍາແມ່ນ້ຳຂອງພະຍາຍາມຫາຂໍ້ຕົກລົງຮ່ວມກັນ. ຈຸດປະສົງຕົ້ນຕໍຂອງການປຶກສາຫາລືກ່ອນການເລີ່ມໂຄງການກໍ່ເພື່ອໃຫ້ໂອກາດແກ່ລັດຖະບານປະເທດສະມາຊິກ ໄດ້ຮ່ວມກັນປະເມີນຜົນກະທົບຂ້າມຊາຍແດນຂອງໂຄງການ. ສຳລັບເຂື່ອນນ້ຳຂອງໄຊຍະບູລີ, ຈົນມາຮອດດຽວນີ້ ລັດຖະບານລາວກໍ່ບໍ່ໄດ້ໃຫ້ໂອກາດແກ່ປະເທດເພື່ອນບ້ານໃກ້ຄຽງໄດ້ດຳເນີນການປະເມີນຜົນກະທົບຂ້າມຊາຍແດນເລີຍ. ໂດຍສະເພາະແລ້ວ, ລາວບໍ່ໄດ້ດຳເນີນການປະເມີນຜົນກະທົບຂ້າມຊາຍແດນກ່ອນເລີ່ມການປຶກສາຫາລືທີ່ຈຳເປັນກ່ອນການປະຕິບັດໂຄງການໃນເດືອນກັນຍາ ປີ 2010.

## ໃນຂະນະທີ່ການປຶກສາຫາລືກຳລັງດຳເນີນໄປຢູ່ນັ້ນ ລັດຖະບານລາວ ບໍ່ມີສິດທີ່ຈະລົງມືປະຕິບັດໂຄງການ.

ກົດໝາຍສາກົນ ແລະ ສັນຍາແມ່ນ້ຳຂອງ ຫ້າມລັດຖະບານປະຕິບັດໂຄງການໃດໜຶ່ງໃນຂະນະທີ່ລັດຖະບານປະເທດຄູ່ພາຄີກຳລັງດຳເນີນການປຶກສາຫາລືກັນກ່ຽວກັບໂຄງການນັ້ນຢູ່—ນີ້ແມ່ນພາກສ່ວນໜຶ່ງຂອງພັນທະຂອງຄູ່ສັນຍາ ທີ່ຕ້ອງດຳເນີນການເຈລະຈາກັນ "ດ້ວຍຄວາມຊື່ສັດ ແລະ ຈິງໃຈຕໍ່ກັນ." ລັດຖະບານລາວ ແລະ ບໍລິສັດ ຊ. ການຊ່າງ ກໍ່ຄື ຜູ້ພັດທະນາໂຄງການໄດ້ເລີ່ມປະຕິບັດໂຄງການກໍ່ສ້າງເຂື່ອນໄຊຍະບູລີໃນທ້າຍປີ 2010 ກ່ອນລັດຖະບານປະເທດພາຄີສັນຍາພົບປະເພື່ອປຶກສາຫາລືກັນກ່ຽວກັບໂຄງການ. ພາຍຫຼັງຕໍ່ມາ, ລັດຖະບານລາວ ໄດ້ຖະແຫຼງຢ່າງຜິດພາດວ່າ

“ວຽກງານກະກຽມ” ແມ່ນໄດ້ຮັບອະນຸຍາດໃຫ້ລົງມືບົນພື້ນຖານສັນຍາແມ່ນ້ຳຂອງ ເຊິ່ງກົງກັບເວລາ ທີ່ການປຶກສາຫາລືກັນດຳເນີນໄປຢູ່.

## ກ່ອນການປຶກສາຫາລື ມັນມີຄວາມຈຳເປັນທີ່ລັດຖະບານລາວ ຈະຕ້ອງສຶກສາຜົນກະທົບຂ້າມຊາຍແດນຂອງໂຄງການ.

ບົນພື້ນຖານກົດໝາຍສາກົນແລ້ວ, ບັນດາລັດຖະບານປະເທດຕ່າງໆໃນໂລກມີຄວາມຈຳເປັນຕ້ອງປ້ອງກັນບໍ່ໃຫ້ເກີດຄວາມເສຍຫາຍແກ່ປະເທດອື່ນໆ, ເຊິ່ງໃນນັ້ນກໍ່ແມ່ນລວມທັງການເອົາໃຈໃສ່ຈັດສັນເວລາໃຫ້ພຽງພໍເພື່ອປະເມີນຜົນກະທົບຂ້າມຊາຍແດນທີ່ອາດເກີດມີຈາກໂຄງການ. ຫຼັງຈາກທີ່ບໍ່ປະຕິບັດການປະເມີນຜົນກະທົບຂ້າມຊາຍແດນຂອງເຂື່ອນໄຊຍະບູລີໃນປີ 2010 ແລ້ວ, ລັດຖະບານລາວກໍ່ໄດ້ປະຕິເສດທີ່ຈະເລື່ອນກຳໜົດການປະຕິບັດໂຄງການອອກໄປພາຍຫຼັງທີ່ຝ່າຍກຳປູເຈຍ ແລະ ຫວຽດນາມໄດ້ນຳສະເໜີໃຫ້ດຳເນີນການສຶກສາຜົນກະທົບໃນກ່ອນຈະມີການປຶກສາຫາລືກັນເກີດຂຶ້ນ. ແທນທີ່ຈະຕອບສະໜອງຄຳສະເໜີດັ່ງກ່າວ, ລັດຖະບານລາວຊໍ້າພັດໄດ້ຖະແຫຼງວ່າເທັກໂນໂລຊີໃໝ່ທີ່ບໍ່ຈຳເປັນຈະຕ້ອງທົດລອງ ທີ່ບໍລິສັດໂປຍຣີໄດ້ສະເໜີໃຫ້ນຳມາໃຊ້ນັ້ນເຫັນວ່າມີຄວາມພຽງພໍໃນການຫຼຸດຜ່ອນຄວາມເສຍຫາຍໄດ້

## ກຳປູເຈຍ, ຫວຽດນາມ ແລະ ໄທ ມີສິດທີ່ຈະຂະຫຍາຍກຳໜົດເວລາການປຶກສາຫາລືກັນກ່ອນດຳເນີນໂຄງການ.

ໄລຍະເວລາກ່ອນການປຶກສາຫາລືກັນທີ່ໄດ້ເສຍໄປແມ່ນມີເຖິງຫົກເດືອນເຕັມ, ແຕ່ພາຍໃຕ້ກົດໝາຍສາກົນແລ້ວ ລັດຖະບານຂອງບັນດາປະເທດພາຄີໃນລຸ່ມນ້ຳຍັງມີສິດທີ່ຈະຂະຫຍາຍເວລາເພື່ອປຶກສາຫາລືກັນອອກໄປໄດ້ອີກ. ລັດຖະບານລາວໄດ້ອ້າງວ່າ ການປຶກສາຫາລືກັນກ່ອນກ່ຽວກັບເຂື່ອນໄຊຍະບູລີນັ້ນໄດ້ສິ້ນກຳໜົດລົງໂດຍອັດຕະໂນມັດຫຼັງຈາກຄົບຫົກເດືອນແລ້ວ. ໃນໄລຍະຫົກເດືອນທຳອິດນີ້, ລັດຖະບານລາວ ບໍ່ສາມາດສະໜອງໄດ້ຂໍ້ມູນທີ່ລັດຖະບານປະເທດອື່ນຕ້ອງການເພື່ອປະເມີນຜົນກະທົບໂຄງການ. ນີ້ຄືບັນຫາທີ່ບໍ່ຮັບປະກັນຈຸດປະສົງຕົ້ນຕໍຂອງການປຶກສາຫາລືທີ່ຈຳເປັນກ່ອນການດຳເນີນໂຄງການ. ຍິ່ງໄປກວ່ານັ້ນ, ໃນຊ່ວງໄລຍະຕົ້ນນີ້ ລັດຖະບານລາວຍັງໄດ້ເລີ່ມລົງມືປະຕິບັດໂຄງການດ້ວຍ.

## ກຳປູເຈຍ, ໄທ ແລະ ຫວຽດນາມ ມີສິດທີ່ຈະຊອກຫາການຊົດເຊີຍແກ່ຜົນເສຍຫາຍທີ່ເກີດຂຶ້ນຈາກຜົນກະທົບໂຄງການ

ພາຍໃຕ້ກົດໝາຍສາກົນແລ້ວ, ລັດຖະບານລາວມີພັນທະໃນການຢຸດໂຄງການໂດຍທັນທີຖ້າຫາກວ່າໂຄງການນັ້ນມີຜົນກະທົບໃຫ້ເກີດຄວາມເສຍຫາຍແກ່ປະເທດເພື່ອນບ້ານໃກ້ຄຽງຂອງຕົນ. ບັນດາລັດຖະບານໃນຂົງເຂດແມ່ນ້ຳຂອງຕອນລຸ່ມ ຄື ກຳປູເຈຍ, ໄທ ແລະ ຫວຽດນາມສາມາດທີ່ຈະຊອກຫາແນວທາງໃນການໃຫ້ການຊົດເຊີຍຜົນເສຍຫາຍທີ່ເກີດຂຶ້ນມາຈາກເຂື່ອນ. ເຖິງຢ່າງໃດກໍ່ຕາມ, ລັດຖະບານກຳປູເຈຍ, ໄທ ແລະ ຫວຽດນາມຈະປະສົບກັບຄວາມຫຍຸ້ງຍາກໃນການຊອກຫາການຊົດເຊີຍແກ່ຜົນເສຍຫານທີ່ເກີດຂຶ້ນຈາກເຂື່ອນ ທັງນີ້ກໍ່ເພາະວ່າໃນເວລານີ້ໂຄງການບໍ່ມີຂໍ້ມູນພື້ນຖານພຽງພໍທີ່ຈະສາມາດວັດແທກໄດ້ວ່າເຂື່ອນໄຊຍະບູລີຈະເຮັດໃຫ້ແມ່ນ້ຳຂອງປ່ຽນແປງໄປຄືແນວໃດໃນຕໍ່ໜ້າ. ສະນັ້ນ, ທັງໝົດສາມປະເທດເຫຼົ່ານີ້ປະສົບກັບງານຫຍຸ້ງຍາກໃນການຕິດຕາມກວດກາຜົນກະທົບຈາກເຂື່ອນ.

ເຂື່ອນໄຊຍະບູລີໄດ້ສໍ່ໃຫ້ເຫັນບັນຫາທີ່ເປັນອັນຕະລາຍມາແລ້ວວ່າເຂື່ອນດັ່ງກ່າວນີ້ຈະສາມາດສົ່ງຜົນກະທົບຕໍ່ການຮ່ວມມືກັນໃນອະນາຄົດ. ໃນປີ 2013 ນີ້, ວຽກງານກໍ່ສ້າງເຂື່ອນນີ້ອາດຈະຂະຫຍາຍໄປເຖິງການກໍ່ສ້າງເຂື່ອນແມ່ນໍ້າຂອງອີກສອງແຫ່ງຄື ເຂື່ອນດອນຊະໂຮງ ແລະ ເຂື່ອນປາກແບ່ງ. ຖ້າຫາກບໍ່ມີການແກ້ໄຂຕັ້ງແຕ່ຫົວທີແລ້ວ, ຄວາມບໍ່ລົງລອຍກັນໃນບັນຫາເຂື່ອນແມ່ນໍ້າຂອງນີ້ຈະສາມາດຂະຫຍາຍໄປສູ່ຂໍ້ຂັດແຍ່ງທີ່ອາດນຳໄປສູ່ຜົນສະທ້ອນຮ້າຍແຮງທາງດ້ານເສດຖະກິດ ແລະ ການເມືອງໄດ້.

ທ່ານສາມາດອ່ານບົດລາຍງານສະບັບສົມບູນເປັນພາສາອັງກິດໄດ້:
http://www.internationalrivers.org/files/attached-files/intl_rivers_analysis_of_mekong_agreement_january_2013.pdf

ຕ້ອງການຂໍ້ມູນເພີ່ມເຕີມ:

- ກະລຸນາເຂົ້າເບິ່ງຂໍ້ມູນເພີ່ມເຕີມໃນໜ້າເວັບໄຊຂອງພວກເຮົາໄດ້ທີ່ Xayaburi Dam webpage